**ມິຊຊາອາທິດທີ 13 ກຳນົດທຳມະດາປີ C**

**ວັນທີ 30 ມິຖຸນາ 2019**



**ພຣະວໍລະສານໂດຍນັກບຸນລູກາ 9, 51-62**

ເມື່ອໃກ້ຈະເຖິງເວລາຕ້ອງຈາກໂລກນີ້ໄປ, ພຣະເຢຊູເຈົ້າຕັດສິນໃຈສະເດັດໄປນະຄອນເຢລູຊາແລມ. ພຣະອົງຊົງໃຊ້ພວກລູກສິດລ່ວງໜ້າໄປກ່ອນ. ພວກລູກສິດກໍອອກເດີນທາງແລະເຂົ້າໄປໃນບ້ານຂອງຊາວຊາມາຣີບ້ານໜຶ່ງເພື່ອຈັດຕຽມທີ່ພັກເຊົາແຕ່ເຂົາບໍ່ຍອມຮັບຕ້ອນ, ຍ້ອນວ່າພຣະອົງຈະໄປນະຄອນເຢລູຊາແລມ. ເມື່ອເຫັນດັ່ງນັ້ນ, ຢາໂກເບແລະຢວງຈຶ່ງທູນພຣະອົງວ່າ: ພຣະອົງເຈົ້າເອີຍ! ພຣະອົງເຫັນດີໃຫ້ພວກຂ້ານ້ອຍສັ່ງໄຟຈາກສະຫວັນມາເຜົາຜານຄົນຊຸມນີ້ບໍ? ແຕ່ພຣະເຢຊູເຈົ້າຊົງຫັນມາຮ້າຍພວກເຂົາແລ້ວກໍສະເດັດໄປບ້ານອື່ນພ້ອມກັບພວກລູກສິດ.

ໃນເວລາພຣະອົງເດີນທາງໄປນັ້ນ, ມີຄົນຜູ້ໜຶ່ງມາທູນວ່າ: ພຣະອົງໄປໃສຂ້ານ້ອຍຂໍໄປນຳ. ພຣະເຢຊູເຈົ້າຕອບວ່າ: ໝາຈອກຍັງມີໂກນ, ນົກຢູ່ອາກາດຍັງມີຮັງ, ສ່ວນບຸດມະນຸດບໍ່ມີບ່ອນພັກເຊົາ.

ແລ້ວພຣະອົງກ່າວກັບຄົນໜຶ່ງອີກວ່າ: ຈົ່ງມານຳເຮົາ. ຄົນນັ້ນທູນຕອບວ່າ: ຂ້ານ້ອຍຂໍເມືອຝັງສົບພໍ່ຂອງຂ້ານ້ອຍກ່ອນ. ພຣະເຢຊູເຈົ້າຈຶ່ງຕອບເຂົາວ່າ: ປະໃຫ້ຄົນຕາຍຝັງກັນເອງເສຍ ສ່ວນເຈົ້າຈົ່ງໄປປະກາດພຣະລາໄຊຂອງພຣະເຈົ້າ.

ມີອີກຜູ້ໜຶ່ງມາທູນພຣະອົງວ່າ: ຂ້ານ້ອຍຈະໄປນຳພຣະອົງ ແຕ່ຂໍໃຫ້ຂ້ານ້ອຍເມືອລາໄທເຮືອນເສຍກ່ອນ. ພຣະເຢຊູເຈົ້າຕອບວ່າ: ຜູ້ໃດຈັບຄັນໄຖແລ້ວຫາກຍັງຫລຽວຄືນຫລັງ ຜູ້ນັ້ນບໍ່ສົມກັບພຣະລາໄຊຂອງພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 9, 51-62**

ຫລັງຈາກວັນສົມໂພດພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າໃນວັນອາທິດທີ່ຜ່ານມາ, ວັນນີ້ພ້ອມກັບພຣະກຣິສຕະຈັກພວກເຮົາກ້າວເຂົ້າສູ່ອາທິດທີສິບສາມກໍານົດທໍາມະດາປີ C (ຫລືປີທີສາມ). ຕະຫລອດກໍານົດທໍາມະດານີ້, ພວກເຮົາຈະອ່ານແລະລໍາເພີງພຣະວໍລະສານໂດຍນັກບຸນລູກາ. ດັ່ງວັນນີ້, ນັກບຸນລູກາເລົ່າໃຫ້ພວກເຮົາຮູ້ເຫັນເຖິງການມຸ່ງສູ່ນະຄອນເຢລູຊາແລມຂອງພຣະເຢຊູເຈົ້າພ້ອມກັບພວກລູກສິດຂອງພຣະອົງ. ແນ່ນອນ, ນະຄອນເຢລູຊາແລມເປັນສະຖານທີ່ສໍາຄັນແລະມີຄວາມໝາຍ ຍ້ອນເປັນບ່ອນທີ່ພຣະເຢຊູເຈົ້າຈະຮັບທົນທໍລະມານແລະຕາຍ.

ບົນເສັ້ນທາງສູ່ນະຄອນເຢລູຊາແລມນີ້ມີບຸລຸດສາມຄົນເຂົ້າມາພົບພຣະເຢຊູເຈົ້າ. ຜູ້ຂຽນພຣະວໍລະສານບໍ່ໄດ້ບອກຊື່ແລະລາຍລະອຽດຂອງສາມຄົນນີ້ໃຫ້ພວກເຮົາຮູ້. ເພາະບາງທີບຸລຸດສາມຄົນນີ້ອາດຈະແມ່ນພວກເຮົາແຕ່ລະຄົນກໍເປັນໄດ້?

ໃນສາມຄົນນີ້, ຄົນທີໜຶ່ງແລະຄົນທີສາມໄດ້ສະແດງຄວາມສະໝັກໃຈຂອງຕົນໃນການຕິດຕາມພຣະເຢຊູເຈົ້າໄປ. ສ່ວນພຣະເຢຊູເຈົ້າ, ພຣະອົງບໍ່ໄດ້ຮຽກເອີ້ນພວກເຂົາເໝືອນກັບພຣະອົງໄດ້ຮຽກເອີ້ນບຸລຸດຜູ້ທີສອງວ່າ: *« ຈົ່ງມານໍາເຮົາ »*. ສິ່ງນີ້ສະທ້ອນໃຫ້ພວກເຮົາເຫັນວ່າພຣະເຢຊູເຈົ້າຊົງຮຽກເອີ້ນຜູ້ທີ່ພຣະອົງຕ້ອງການ. ແຕ່ບຸລຸດຜູ້ທີສອງແລະຜູ້ທີສາມມີຄວາມຄ້າຍຄືກັນຢູ່ບ່ອນວ່າ ທັງສອງລ້ວນແຕ່ມີເງື່ອນໄຂດ້ານຊີວິດຄອບຄົວ. ຜູ້ໜຶ່ງຂໍເມືອຝັງສົບພໍ່ ແລະອີກຜູ້ໜຶ່ງຂໍເມືອລາໄທເຮືອນແລ້ວຈຶ່ງຕິດຕາມພຣະເຢຊູເຈົ້າໄປ.

ພຣະເຢຊູເຈົ້າກ່າວຕອບຜູ້ທີສອງວ່າ: *« ປະໃຫ້ຄົນຕາຍຝັງກັນເອງເສຍ ສ່ວນເຈົ້າຈົ່ງໄປປະກາດພຣະລາໄຊຂອງພຣະເຈົ້າ »*. ຄໍາເວົ້າຂອງພຣະເຢຊູເຈົ້ານີ້ອາດທໍາໃຫ້ພວກເຮົາຄິດວ່າພຣະອົງບໍ່ມີຄວາມເມດຕາປານີຕໍ່ບຸລຸດຜູ້ນີ້. ແລະຄໍາຖາມທີ່ຕາມມາຄື ການຕິດຕາມພຣະເຢຊູເຈົ້າຈໍາເປັນຕ້ອງຕັດຂາດສາຍໄຍຄວາມຜູກພັນແລະຄວາມກະຕັນຍູຕໍ່ຜູ້ເປັນພໍ່ເປັນແມ່ບໍ? ຖ້າພວກເຮົາອ່ານແລະລໍາເພີງຄໍາເວົ້າຂອງພຣະເຢຊູເຈົ້າຢ່າງເລິກເຊິ່ງແລ້ວພວກເຮົາຈະເຂົ້າໃຈວ່າ ສິ່ງທີ່ພຣະອົງກ່າວມານີ້ບໍ່ໄດ້ໝາຍວ່າບໍ່ໃຫ້ມີຄວາມຜູກພັນແລະກະຕັນຍູຕໍ່ຜູ້ເປັນພໍ່ເປັນແມ່, ແຕ່ສິ່ງທີ່ສໍາຄັນແລະຮີບດ່ວນໃນການຕິດຕາມພຣະເຢຊູເຈົ້າຄືການປະກາດພຣະລາໄຊຂອງພຣະເຈົ້າ. ແລະພຣະລາໄຊຂອງພຣະເຈົ້ານີ້ແມ່ນສໍາລັບຜູ້ເປັນເທົ່ານັ້ນບໍ່ແມ່ນສໍາລັບຜູ້ຕາຍ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງກ່າວວ່າ: *« ປະໃຫ້ຄົນຕາຍຝັງຄົນຕາຍເສຍ »*. ເຊັ່ນດຽວກັບຄໍາຕອບຂອງພຣະເຢຊູເຈົ້າຕໍ່ບຸລຸດຜູ້ທີສາມວ່າ: *« ຜູ້ໃດຈັບຄັນໄຖແລ້ວຫາກຍັງຫລຽວຄືນຫລັງ ຜູ້ນັ້ນບໍ່ສົມກັບພຣະລາໄຊຂອງພຣະເຈົ້າ »*. ໝາຍວ່າພຣະລາໄຊຂອງພຣະເຈົ້າເປັນສິ່ງຮີບດ່ວນທີ່ຕ້ອງປະກາດ ແລະພວກເຮົາຕ້ອງໃຫ້ເວລາທັງໝົດທີ່ພວກເຮົາມີຕໍ່ພາລະກິດອັນສໍາຄັນນີ້.

ຂໍໃຫ້ອາຈາຂອງພຣະເຈົ້າວັນນີ້ທໍາໃຫ້ພວກເຮົາເຫັນເຖິງຄວາມສໍາຄັນແລະຈໍາເປັນຂອງການປະກາດພຣະລາໄຊພຣະເຈົ້າໃນຊີວິດຂອງພວກເຮົາແຕ່ລະຄົນ. ຍ້ອນພວກເຮົາລ້ວນແຕ່ໄດ້ຖືກຮຽກເອີ້ນຈາກພຣະເຈົ້າຜ່ານທາງສິນລ້າງບາບໃຫ້ມາເປັນສິດຂອງພຣະອົງໂດຍການເປັນຜູ້ປະກາດພຣະລາໄຊຂອງພຣະເຈົ້າໃຫ້ທຸກຄົນຮູ້ແລະເຊື່ອ, ເພື່ອພວກເຂົາຈະໄດ້ຮູ້ຈັກແລະຮັກພຣະອົງ. ແລະເປັນຕົ້ນ, ເພື່ອພວກເຂົາຈະໄດ້ພຣະລາໄຊຂອງພຣະເຈົ້າມາເປັນມໍລະດົກນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ